ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງພະລັງງານ ແລະ ບໍ່ແຮ່ ເລກທີ 1605 /ພບ

ນະຄອນຫຼວງວຽງຈັນ, ວັນທີ 22 AUG 2019

# ຂໍ້ຕົກລົງ

## ວ່າດ້ວຍການຄຸ້ມຄອງທຶນພັດທະນາຊຸມຊົນ ຂອງໂຄງການຜະລິດໄຟຟ້າສະເພາະ ສໍາລັບ IPP

- ອີງຕາມກົດໝາຍວ່າດ້ວຍໄຟຟ້າ (ສະບັບປັບປຸງ) ເລກທີ 19/ສພຊ, ວັນທີ 09 ພຶດສະພາ 2017;
- ອີງຕາມດໍາລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງພະລັງງານ ແລະ ບໍ່ແຮ່ເລກທີ 296/ນຍ, ລົງວັນທີ 4 ກັນຍາ 2017;
- ອີງຕາມສັນຍາສໍາປະທານລະຫວ່າງລັດຖະບານແຫ່ງ ສປປ ລາວ ແລະ ບໍລິສັດໂຄງການພະລັງງານໄຟຟ້າສະເພາະ.

**ລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່ ຕົກລົງດັ່ງນີ້:**

### ມາດຕາ 1 ຈຸດປະສົງ

ເພື່ອກໍານົດຫຼັກການ, ລະບຽບການ ແລະ ມາດຕະການ ການຈັດຕັ້ງປະຕິບັດການຄຸ້ມຄອງທຶນພັດທະນາຊຸມຊົນ ຂອງໂຄງການຜະລິດໄຟຟ້າສະເພາະ (ໂຄງການ IPP) ໄປຄຽງຄູ່ກັບການພັດທະນາຊີວິດການເປັນຢູ່ຂອງປະຊາຊົນ ທີ່ຖືກຜົນກະທົບທາງກົງ ແລະ ທາງອ້ອມ ໃຫ້ດີຂຶ້ນກວ່າເກົ່າ ແລະ ຕິດພັນກັບແຜນລົບລ້າງຄວາມທຸກຍາກ ກໍ່ຄືວຽກງານສາມສ້າງຂອງລັດຖະບານ ໂດຍສ້າງພື້ນຖານໂຄງລ່າງ ເຂດຈັດສັນປະຊາຊົນທີ່ຖືກຜົນກະທົບທາງກົງ ແລະ ທາງອ້ອມໃຫ້ເຊື່ອມໂຍງກັບແຜນຍຸດທະສາດ ແລະ ການພັດທະນາຂອງທ້ອງຖິ່ນໄປເທື່ອລະກ້າວ ເປັນຕົ້ນການຊຸກຍູ້ສົ່ງເສີມຊຸມຊົນໃຫ້ມີສ່ວນຮ່ວມໃນການປະກອບສ່ວນກັບການພັດທະນາໂຄງການພະລັງງານໄຟຟ້າໃຫ້ເຂັ້ມແຂງ ແລະ ຮັບປະກັນຄວາມຍືນຍົງຢ່າງຮອບດ້ານ.

### ມາດຕາ 2 ຂອບເຂດການນໍາໃຊ້

ຂໍ້ຕົກລົງສະບັບນີ້ ນໍາໃຊ້ກັບທຸກໂຄງການຜະລິດໄຟຟ້າສະເພາະໃນຂອບເຂດທົ່ວປະເທດ ເຊິ່ງປະກອບດ້ວຍ ໂຄງການຂັ້ນສູນກາງ ແລະ ທ້ອງຖິ່ນ ອະນຸມັດ.

### ມາດຕາ 3 ການອະທິບາຍຄໍາສັບ

3.1 **ທຶນພັດທະນາຊຸມຊົນຂອງໂຄງການຜະລິດໄຟຟ້າສະເພາະ** ໝາຍເຖິງເງິນທຶນຂອງໂຄງການພັດ ທະນາພະລັງງານໄຟຟ້າ ຕາມພັນທະໃນສັນຍາສໍາປະທານ ເພື່ອມາຮັບໃຊ້ການພັດທະນາທ້ອງຖິ່ນເຂດຈັດສັນຍົກຍ້າຍປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການ.

3.2 **ການພັດທະນາຊຸມຊົນ** ໝາຍເຖິງ ການໃຫ້ນະໂຍບາຍດ້ານການພັດທະນາຄວາມຮູ້, ຄວາມສາມາດ, ທັກສະວິຊາການ, ການປະກອບອາຊີບສ້າງລາຍຮັບ ແລະ ການນຳໃຊ້ເງິນທຶນປັບປຸງ, ກໍ່ສ້າງພື້ນຖານໂຄງລ່າງ ຂອງປະຊາຊົນ ໃນຂອບເຂດໂຄງການ ແລະ ພາກສ່ວນອື່ນທີ່ມີສາຍພົວພັນກ່ຽວຂ້ອງກັບໂຄງການ.

3.3 **ໂຄງການຜະລິດໄຟຟ້າສະເພາະ** (Independent Power Producer ຂຽນຫຍໍ້ IPP) ໝາຍເຖິງ ໂຄງການໄຟຟ້າ ຫຼື ທຸລະກິດໄຟຟ້າ ທີ່ເອກະຊົນລົງທຶນທັງໝົດ ຫຼື ຮ່ວມທຶນກັບລັດວິສາຫະກິດ ເພື່ອຫວັງຜົນກຳໄລ ຊຶ່ງເປັນເອກະລາດຈາກລັດວິສາຫະກິດທີ່ເປັນຜູ້ຜະລິດ ແລະ ຜູ້ສະໜອງໄຟຟ້າຕົ້ນຕໍຂອງປະເທດ.

3.4 **ສັນຍາສຳປະທານ** ໝາຍເຖິງ ສັນຍາທີ່ບໍລິສັດໂຄງການ ຫຼື ຜູ້ພັດທະນາໂຄງການເອກະລາດ ເຊັນກັບລັດຖະບານ ເພື່ອລົງທຶນພັດທະນາໂຄງການພະລັງງານໄຟຟ້າ ເຊິ່ງຕາງໜ້າໂດຍກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງພະລັງງານ ແລະ ບໍ່ແຮ່.

3.5 **ທ້ອງຖິ່ນ**: ແມ່ນ ບ້ານ, ເມືອງ, ແຂວງ ບ່ອນໂຄງການຕັ້ງຢູ່.

**ມາດຕາ 4 ຫຼັກການການນຳໃຊ້ທຶນ**

ເປັນການນຳໃຊ້ງົບປະມານທຶນພັດທະນາຊຸມຊົນ ທີ່ເປັນພັນທະຂອງບໍລິສັດໂຄງການ ລະບຸໄວ້ໃນສັນຍາສຳປະທານ, ມີຫຼັກການນຳໃຊ້ໃຫ້ຖືກເປົ້າໝາຍ ໂດຍຜ່ານຂັ້ນຕອນການຄົ້ນຄວ້າພິຈາລະນາ ແລະ ຮັບຮອງຂອງຄະນະກຳມະການ ແລະ ຜ່ານການຕິດຕາມກວດກາຂອງພາກສ່ວນກ່ຽວຂ້ອງຂອງສູນກາງ, ທ້ອງຖິ່ນ ແລະ ບໍລິສັດໂຄງການ.

**ມາດຕາ 5 ເປົ້າໝາຍນຳໃຊ້ກອງທຶນ**

ນຳໃຊ້ໃນການກໍ່ສ້າງ, ປັບປຸງ ແລະ ການບຳລຸງຮັກສາບັນດາພື້ນຖານໂຄງລ່າງຂອງຊຸມຊົນ ເຊັ່ນ: ຖະໜົນ, ທາງທະລຸເຂົ້າບ້ານ, ທາງຍ່າງ, ຂົວ, ໂຮງຮຽນ, ໂຮງໝໍ, ສຸກສາລາ, ຕະຫຼາດ, ລະບົບໄຟຟ້າ, ລະບົບການສື່ສານ, ຊົນລະປະທານ ແລະ ລະບົບນໍ້າກິນ-ນໍ້າໃຊ້; ການພັດທະນາຊັບພະຍາກອນມະນຸດ ໃນເຂດຊຸມຊົນໃກ້ຄຽງໂຄງການ ເປັນຕົ້ນແມ່ນການຝຶກອົບຮົມ, ທຶນການສຶກສາ, ການສົ່ງເສີມອາຊີບ, ສ້າງລາຍຮັບ ເຊັ່ນ: ບ້ານຈັດສັນ, ບ້ານຫຍັບຍ້າຍ, ບ້ານເຈົ້າພາບ, ບ້ານໃກ້ຄຽງທີ່ຖືກຜົນກະທົບທາງອ້ອມ ໂດຍສະເພາະແມ່ນເຂດອ່າງເກັບນໍ້າ ແລະ ເຂດລຸ່ມເຂື່ອນ, ບ້ານທີ່ປະຊາຊົນສະໝັກໃຈໄປຢູ່ (ຫຼື ປະຊາຊົນບໍ່ໄປນຳໂຄງການ) ແລະ ການອະນຸລັກຮີດຄອງປະເພນີ ຫຼື ວັດທະນະທຳ ແລະ ກິດຈະກຳອື່ນໆ ຕາມການຕົກລົງຂອງຄະນະກຳມະການຄຸ້ມຄອງ ແຕ່ໃຫ້ສອດຄ່ອງ ແລະ ຖືກຕ້ອງຕາມນະໂຍບາຍຂອງທຶນພັດທະນາຊຸມຊົນ.

**ມາດຕາ 6 ແຫຼ່ງທຶນທີ່ໄດ້ຮັບ**

ໂຄງການພະລັງງານໄຟຟ້າສະເພາະ ຕ້ອງໄດ້ປະຕິບັດພັນທະມອບທຶນພັດທະນາຊຸມຊົນ ເປັນແຕ່ລະປີ ທີ່ກຳນົດໄວ້ໃນສັນຍາສຳປະທານ.

**ມາດຕາ 7 ການປະຕິບັດພັນທະຂອງບໍລິສັດໂຄງການ**

7.1 ບໍລິສັດໂຄງການຕ້ອງໄດ້ແຕ່ງຕັ້ງຜູ້ປະສານງານຂອງບໍລິສັດ ເພື່ອຈັດຕັ້ງປະຕິບັດວຽກງານຮ່ວມກັບຄະນະກຳມະການ ແລະ ອົງການຈັດຕັ້ງພາກລັດທີ່ກ່ຽວຂ້ອງ.

7.2 ບໍລິສັດໂຄງການຕ້ອງປະຕິບັດພັນທະທຶນ ໂດຍການສະສົມໄວ້ເປັນແຕ່ລະປີ ເພື່ອຮອງຮັບໃນການສະໜອງໃຫ້ແກ່ບັນດາກິດຈະກຳ ແລະ ການບໍລິຫານຂອງຄະນະກຳມະການ.

**ມາດຕາ 8 ການແຕ່ງຕັ້ງຄະນະຮັບຜິດຊອບຄຸ້ມຄອງ ແລະ ນຳໃຊ້ທຶນ**

8.1 ຄະນະຮັບຜິດຊອບຄຸ້ມຄອງ ແລະ ນຳໃຊ້ທຶນພັດທະນາຊຸມຊົນ ແມ່ນເຈົ້າແຂວງ, ເຈົ້າຄອງນະຄອນ ເປັນຜູ້ແຕ່ງຕັ້ງ ໂດຍການສະເໜີຂອງພະແນກພະລັງງານ ແລະ ບໍ່ແຮ່;

8.2 ຄະນະກຳມະການ ປະກອບມີບັນດາພາກສ່ວນກ່ຽວຂ້ອງຂອງແຂວງ ເຊິ່ງແມ່ນພະແນກພະລັງງານ ແລະ ບໍ່ແຮ່ແຂວງ ເປັນກອງເລຂາ ເຮັດໜ້າທີ່ຕາມພາລະບົດບາດທີ່ກຳນົດໄວ້ໃນຂໍ້ຕົກລົງ ເຊິ່ງເປັນຜູ້ຂຶ້ນແຜນ-ສະເໜີແຜນກິດຈະກຳ ແລະ ແຜນງົບປະມານ, ຈັດການປະມູນກິດຈະກຳກໍ່ສ້າງຕ່າງໆ ແລະ ສະຫຼຸບລາຍງານ;

8.3 ກອງເລຂາຄະນະກຳມະການຊີ້ນຳຮ່ວມໂຄງການ ຫຼື ກົມທຸລະກິດພະລັງງານ ເປັນໃຈກາງປະສານງານ, ກວດກາການຂຶ້ນແຜນກິດຈະກຳ ແລະ ແຜນງົບປະມານ, ຕິດຕາມ ແລະ ກວດກາການກໍ່ສ້າງກິດຈະກຳ ໂດຍການປະສານກັບບໍລິສັດຜູ້ພັດທະນາໂຄງການ;

8.4 ບໍລິສັດຜູ້ພັດທະນາໂຄງການ ເປັນຜູ້ສະໜອງງົບປະມານ ແລະ ຕິດຕາມກິດຈະກຳກໍ່ສ້າງ.

**ມາດຕາ 9 ສິດ ແລະ ໜ້າທີ່ຂອງຄະນະກຳມະການ**

9.1 ກຳນົດນະໂຍບາຍ, ລະບຽບການ ແລະ ວິທີການນຳໃຊ້ງົບປະມານ ທຶນພັດທະນາຊຸມຊົນ ຢ່າງມີປະສິດທິຜົນ ແລະ ໂປ່ງໃສ ໂດຍສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ຂອງລັດຖະບານ, ທ້ອງຖິ່ນ ແລະ ລະບຽບການຕ່າງໆ ຂອງຂະແໜງການທີ່ກ່ຽວຂ້ອງ ໃນການພັດທະນາຊຸມຊົນ ພ້ອມພັນຂະຫຍາຍ, ເຜີຍແຜ່ ແລະ ຊີ້ນຳ-ນຳພາ ໃນການຈັດຕັ້ງປະຕິບັດ;

9.2 ແຕ່ງຕັ້ງຫົວໜ້າ ແລະ ຄະນະຊ່ວຍວຽກກອງເລຂາຄະນະກຳມະການປະຈຳການ ພ້ອມທັງກຳນົດຜູ້ອະນຸມັດງົບປະມານບໍລິຫານ;

9.3 ພິຈາລະນາຮັບຮອງເອົາແຜນງານ, ແຜນງົບປະມານ, ແຜນກິດຈະກຳ ແລະ ການປະມູນແຕ່ລະກິດຈະກຳ ທີ່ສະເໜີຂໍນຳໃຊ້ທຶນພັດທະນາຊຸມຊົນ ໂດຍສົມທົບກັບຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງຕາມຄວາມເໝາະສົມ;

9.4 ກຳນົດວິທີການນຳໃຊ້ງົບປະມານບໍລິຫານ ຂອງກອງເລຂາກອງທຶນພັດທະນາຊຸມຊົນຢ່າງມີປະສິດທິຜົນ ດ້ວຍຄວາມໂປ່ງໃສ ເປັນແຕ່ລະໄລຍະ;

9.5 ຊີ້ນຳກອງເລຂາໃນການສັງລວມ, ຕິດຕາມ ແລະ ສະຫຼຸບລາຍງານ ກ່ຽວກັບການຄຸ້ມຄອງ ແລະ ການນຳໃຊ້ທຶນພັດທະນາຊຸມຊົນ ໃຫ້ມີຜົນສຳເລັດ ແລະ ປະສິດທິຜົນສູງ;

9.6 ຮັບປະກັນວ່າບັນດາກິດຈະກຳທີ່ນຳໃຊ້ງົບປະມານໄດ້ຮັບການຕິດຕາມກວດກາ ແລະ ມີການປະເມີນຜົນປະຈຳປີ ຢ່າງເປັນປົກກະຕິ;

9.7 ຮັບການສ່ອງແສງ-ລາຍງານ, ຜົນການຕິດຕາມກວດກາ ແລະ ໃຫ້ທິດຊີ້ນຳໃນການຈັດຕັ້ງປະຕິບັດແຜນການ ແລະ ແຜນດຳເນີນງານຕ່າງໆ ເປັນແຕ່ລະໄລຍະ;

9.8 ປະຕິບັດໜ້າທີ່ ແລະ ພາລະບົດບາດອື່ນໆ ຕາມການມອບໝາຍຂອງຂັ້ນເທິງ ແລະ ຕາມລະບຽບກົດໝາຍ.

**ມາດຕາ 10 ສິດ ແລະ ໜ້າທີ່ຂອງກອງເລຂາຄະນະກຳມະການ**

10.1 ມີພາລະບົດບາດ ເປັນເສນາທິການໃຫ້ແກ່ຄະນະກຳມະການ ວຽກຄຸ້ມຄອງນຳໃຊ້ທຶນພັດທະນາຊຸມຊົນ;

10.2 ປະຊາສຳພັນຫາອົງການຈັດຕັ້ງບ້ານຈັດສັນ, ຊຸມຊົນກ່ຽວຂ້ອງ ເພື່ອເກັບກຳການສະເໜີຂອງອົງການຈັດຕັ້ງດັ່ງກ່າວ ທີ່ຈະໄດ້ນຳໃຊ້ທຶນພັດທະນາຊຸມຊົນ;

10.3 ສັງລວມບັນດາກິດຈະກຳທີ່ພາກສ່ວນກ່ຽວຂ້ອງ ສະເໜີນຳໃຊ້ງົບປະມານທຶນພັດທະນາຊຸມຊົນ ເພື່ອສະເໜີແຜນງົບປະມານເຂົ້າໃນການດຳເນີນວຽກງານທີ່ກ່ຽວຂ້ອງ ຕໍ່ຄະນະກຳມະການອະນຸມັດ, ເຮັດບົດບັນທຶກໃນການອະນຸມັດກິດຈະກຳທີ່ກ່ຽວຂ້ອງ;

10.4 ກະກຽມແຜນເງິນ ແລະ ແຜນກິດຈະກຳປະຈຳປີ ຂອງໂຄງການທີ່ໄດ້ຮັບທຶນຈາກພັດທະນາຊຸມຊົນໂດຍໃຫ້ສອດຄ່ອງກັບຄຳຮ້ອງຂໍນຳໃຊ້ງົບປະມານດັ່ງກ່າວ;

10.5 ສ້າງແຜນໃນການຄຸ້ມຄອງ, ນຳໃຊ້ ແລະ ພັດທະນາ ບັນດາກິດຈະກຳທີ່ນຳໃຊ້ເງິນທຶນ ທີ່ສຳເລັດການກໍ່ສ້າງແລ້ວ ຮ່ວມຊຸມຊົນໃຫ້ມີຜົນປະໂຫຍດສູງສຸດ;

10.6 ເປີດບັນຊີຂອງກອງເລຂາຄະນະກຳມະການຄຸ້ມຄອງ ແລະ ນຳໃຊ້ທຶນພັດທະນາຊຸມຊົນ; ສະຫຼຸບບັນຊີການເງິນ, ເກັບຮັກສາໃບບິນ ແລະ ເອກະສານຕ່າງໆທີ່ເປັນທຸລະກຳທາງດ້ານການເງິນທັງໝົດ;

10.7 ສົມທົບກັບພາກສ່ວນກ່ຽວຂ້ອງ ຕິດຕາມກວດກາບັນດາໂຄງການ ແລະ ກິດຈະກຳພັດທະນາຊຸມຊົນທັງໝົດ ທີ່ນຳໃຊ້ເງິນຈາກທຶນພັດທະນາຊຸມຊົນ ຫຼື ກິດຈະກຳເຫຼົ່ານັ້ນ ໄດ້ຖືກຈັດຕັ້ງປະຕິບັດຕາມແຜນການ ແລະ ຄາດໝາຍທີ່ກຳນົດໄວ້;

10.8 ສະຫຼຸບ ແລະ ລາຍງານເປັນປະຈຳ 3 ເດືອນ, 6 ເດືອນ ແລະ ປະຈຳປີ ໃນການນຳໃຊ້ງົບປະມານ ແລະ ລວມທັງຄວາມຄືບໜ້າຂອງບັນດາໂຄງການ ແລະ ກິດຈະກຳທັງໝົດ ເພື່ອລາຍງານຕໍ່ຄະນະກຳມະການ ແລະ ພາກສ່ວນກ່ຽວຂ້ອງຮັບຊາບເປັນປະຈຳ;

10.9 ມີສິດນຳສະເໜີປັບປຸງ, ດັດແກ້ແຜນການເຄື່ອນໄຫວ ແລະ ແຜນງົບປະມານປະຈຳປີ ທີ່ເຫັນວ່າບໍ່ສອດຄ່ອງກັບແຜນກິດຈະກຳຂອງໂຄງການ ຫຼື ແຜນພັດທະນາເສດຖະກິດ-ສັງຄົມຂອງເມືອງ ແລະ ແຜນແມ່ບົດຕ່າງໆໃນການຄຸ້ມຄອງໂຄງການພະລັງງານໄຟຟ້າ;

10.10 ກະກຽມກອງປະຊຸມວິຊາການ, ນຳສະເໜີແຜນການເຮັດວຽກປະຈຳປີໃຫ້ແກ່ຄະນະກຳມະການຊີ້ນຳ ແລະ ຄົ້ນຄວ້າພິຈາລະນາຮັບຮອງ;

10.11 ຈັດຕັ້ງປະຕິບັດ ພາລະບົດບາດ, ສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍຂອງຂັ້ນເທິງ ແລະ ຕາມລະບຽບກົດໝາຍ.

**ມາດຕາ 11 ການຄັດເລືອກຜູ້ຮັບເໝົາ**

ພາຍຫຼັງແຜນແຕ່ລະກິດຈະກຳໄດ້ຜ່ານການຮັບຮອງ, ຄະນະກຳມະການຕ້ອງໄດ້ປະກາດ ແລະ ຄັດເລືອກຜູ້ຮັບເໝົາກໍ່ສ້າງບັນດາກິດຈະກຳ ທີ່ຊະນະການປະມູນ ທີ່ມີເງື່ອນໄຂຄົບຖ້ວນທຸກອົງປະກອບຕາມລະບຽບການປະມູນ, ຜູ້ຮັບເໝົາຈຶ່ງສາມາດ ດຳເນີນການກໍ່ສ້າງ ຕາມໜ້າວຽກຕົກລົງກັນໃນສັນຍາຮັບເໝົາ.

**ມາດຕາ 12 ການຈັດຫາຜະລິດຕະພັນ, ວັດສະດຸ ແລະ ການບໍລິການທ້ອງຖິ່ນ**

ຜູ້ຮັບເໝົາທີ່ຊະນະການປະມູນ ຈັດຕັ້ງປະຕິບັດກໍ່ສ້າງກິດຈະກຳ ຕ້ອງຖືເປັນບູລິມະສິດໃນການນຳໃຊ້ຜະລິດຕິພັນ, ວັດສະດຸ, ການບໍລິການ ແລະ ແຮງງານໃນທ້ອງຖິ່ນ ຕາມການແນະນຳ ຫຼື ກຳນົດໄວ້ໃນສັນຍາຮັບເໝົາ.

ມາດຕາ 13 ການບໍລິຈາກ ແລະ ມອບໂອນສິ່ງອໍານວຍຄວາມສະດວກຕ່າງໆ

ວັດສະດຸ, ອຸປະກອນ ແລະ ສິ່ງອໍານວຍຄວາມສະດວກຕ່າງໆ ຮັບໃຊ້ການກໍ່ສ້າງບັນດາກິດຈະກໍາທີ່ບໍລິສັດຜູ້ຮັບເໝົາ ຕ້ອງການບໍລິຈາກໃຫ້ຊຸມຊົນທ້ອງຖິ່ນບ່ອນໂຄງການຕັ້ງຢູ່ ແມ່ນໄດ້ຜ່ານການເຫັນດີຂອງຄະນະກໍາມະການ.

ມາດຕາ 14 ການຂຶ້ນແຜນນໍາໃຊ້ງົບປະມານບໍລິຫານ

14.1 ກອງເລຂາຄະນະກໍາມະການຄຸ້ມຄອງທຶນພັດທະນາຊຸມຊົນ ຂຶ້ນແຜນງົບປະມານຮັບໃຊ້ບໍລິຫານຂອງກອງເລຂາ ແລະ ຄະນະກໍາມະການຄຸ້ມຄອງທຶນພັດທະນາຊຸມຊົນໃນການເຄື່ອນໄຫວ ເຊັ່ນ: ການສຶກສາສໍາຫຼວດ, ການວາງແຜນກິດຈະກໍາ, ການປະຊຸມ, ການປະມູນ, ການຕິດຕາມກວດກາ ແລະ ສະຫຼຸບລາຍງານແຕ່ລະກິດຈະກໍາ, ປະຈໍາປີ ແມ່ນມາຈາກບ້ວງທຶນພັດທະນາຊຸມຊົນ ຈໍານວນ 10% ຂອງລາຍຮັບແຕ່ລະປີຈາກໂຄງການ ໂດຍຜ່ານການເຫັນດີຂອງຄະນະກໍາມະການ ແລະ ການອະນຸມັດຂອງປະທານ;

14.2 ງົບປະມານຮັບໃຊ້ບໍລິຫານສະໜັບສະໜູນໃນການປະສານງານ, ຕິດຕາມກວດກາ ແລະ ຄຸ້ມຄອງການຈັດຕັ້ງປະຕິບັດຕາມສັນຍາສໍາປະທານຂອງໂຄງການ (ຂັ້ນສູນກາງ) ແມ່ນລວມຢູ່ໃນຂໍ້ 14.1;

14.3 ກອງເລຂາຄະນະກໍາມະການຄຸ້ມຄອງທຶນພັດທະນາຊຸມຊົນ ຂຶ້ນແຜນງົບປະມານບັນດາກິດຈະກໍາໃຫ້ບໍລິສັດຜູ້ຮັບເໝົາ ທີ່ໄດ້ຜ່ານການປະມູນກໍ່ສ້າງແຕ່ລະກິດຈະກໍາດັ່ງກ່າວນັ້ນ ໂດຍຜ່ານການເຫັນດີຂອງຄະນະກໍາມະການ ແລະ ການອະນຸມັດຂອງປະທານ.

ມາດຕາ 15 ການເບີກຈ່າຍງົບປະມານບໍລິຫານ

15.1 ງົບປະມານບໍລິຫານຂອງກອງເລຂາຄະນະກໍາມະການຄຸ້ມຄອງ ແລະ ນໍາໃຊ້ເງິນທຶນພາຍຫຼັງມີແຜນທີ່ໄດ້ຜ່ານການຮັບຮອງແລ້ວ ນໍາສົ່ງໃຫ້ກົມທຸລະກິດພະລັງງານ ເພື່ອສົ່ງໃຫ້ບໍລິສັດໂຄງການໂອນຜ່ານບັນຊີຂອງຄັງເງິນຂອງແຂວງ.

15.2 ງົບປະມານທີ່ນໍາໃຊ້ເຂົ້າໃນແຕ່ລະກິດຈະກໍາ ທີ່ໄດ້ຜ່ານການກວດກາຮັບຮອງຜົນສໍາເລັດແລ້ວ ແມ່ນຈະຖືກໂອນຈາກບໍລິສັດໂຄງການ ໄປຫາບໍລິສັດຜູ້ຮັບເໝົາກໍ່ສ້າງກິດຈະກໍາຕາມສັນຍາຮັບເໝົາໂດຍກົງ ໂດຍປະຕິບັດຕາມຂັ້ນຕອນດຽວກັບຂໍ້ 15.1.

ມາດຕາ 16 ກອງປະຊຸມຄະນະກໍາມະການຄຸ້ມຄອງ ແລະ ນໍາໃຊ້ທຶນ

ຈັດກອງປະຊຸມປະຈໍາ 6 ເດືອນ ແລະ ປະຈໍາປີ ເພື່ອສະຫຼຸບຄວາມຄືບໜ້າການຈັດຕັ້ງປະຕິບັດ, ການປະເມີນຜົນຂອງບັນດາກິດຈະກໍາ, ການຮັບຮອງແຜນງົບປະມານ ແລະ ຄົ້ນຄວ້າພິຈາລະນາແຜນກິດຈະກໍາ.

ມາດຕາ 17 ການຕິດຕາມກວດກາ

ການຕິດຕາມກວດກາການກໍ່ສ້າງບັນດາກິດຈະກໍາ ຕ້ອງເປັນໄປຕາມສັນຍາຮັບເໝົາ, ໄດ້ຜ່ານການຮັບຮູ້ ແລະ ເຂົ້າຮ່ວມຈາກພາກສ່ວນທີ່ກ່ຽວຂ້ອງ ຕາມມາດຕາ 8.3 ໃນການກວດກາຄວາມຄືບໜ້າ ແລະ ຜົນສໍາເລັດຂອງວຽກງານ.

ມາດຕາ 18 ການລາຍງານ

ກອງເລຂາຄະນະກໍາມະການຄຸ້ມຄອງ ແລະ ນໍາໃຊ້ກອງທຶນ ຕ້ອງໄດ້ລາຍງານວຽກປະຈໍາເດືອນໃຫ້ແກ່ຄະນະກໍາມະການຄຸ້ມຄອງ ແລະ ນໍາໃຊ້ເງິນທຶນ, ກອງເລຂາຄະນະກໍາມະການຊີ້ນໍາຮ່ວມໂຄງການ ຫຼື ກົມທຸລະກິດພະລັງງານ ແລະ ບໍລິສັດຜູ້ພັດທະນາໂຄງການ ເປັນປົກກະຕິ.

**ມາດຕາ 19 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດ ບັນດາກິດຈະກຳພັດທະນາຊຸມຊົນທີ່ນຳໃຊ້ທຶນພັດທະນາຊຸມຊົນ ຈະໄດ້ຮັບລາງວັນ ຫຼື ການຍ້ອງຍໍຊົມເຊີຍຕາມຄວາມເໝາະສົມຕາມລະບຽບການ ຈາກຂະແໜງການພະລັງງານ ແລະ ບໍ່ແຮ່, ອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການອື່ນໆທີ່ກ່ຽວຂ້ອງ.

**ມາດຕາ 20 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງພາກລັດ ແລະ ບໍລິສັດໂຄງການ ຈັດຕັ້ງປະຕິບັດບໍ່ສອດຄ່ອງກັບຂໍ້ຕົກລົງສະບັບນີ້ ແມ່ນຈະຖືກດຳເນີນການຕາມລະບຽບກົດໝາຍ. ບໍລິສັດໂຄງການບໍ່ປະຕິບັດພັນທະຈະຖືກແຈ້ງເຕືອນ, ປັບໃໝ ແລະ ສັ່ງໂຈະການດຳເນີນງານຕາມທີ່ໄດ້ກຳໄວ້ໃນສັນຍາສຳປະທານ.

**ມາດຕາ 21 ການເຜີຍແຜ່**

21.1 ເພື່ອຮັບປະກັນໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ ເຂົ້າໃຈແຈ້ງຕໍ່ກັບເນື້ອໃນຂໍ້ຕົກລົງສະບັບນີ້ ໄດ້ຈັດຕັ້ງປະຕິບັດໃຫ້ມີຄວາມຄ່ອງຕົວ. ກະຊວງພະລັງງານ ແລະ ບໍ່ແຮ່ ຕ້ອງຈັດຕັ້ງດຳເນີນການຝຶກອົບຮົມໃຫ້ບັນດາພະນັກງານບ້ານ, ເມືອງ, ແຂວງບ່ອນໂຄງການຕັ້ງຢູ່ ແລະ ບໍລິສັດໂຄງການ ທີ່ມີສ່ວນຮ່ວມໂດຍກົງໃນການຄຸ້ມຄອງບໍລິຫານເງິນທຶນ ແລະ ວຽກງານພັດທະນາຊຸມຊົນ.

21.2 ມອບໃຫ້ກົມທຸລະກິດພະລັງງານ ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແຕ່ສູນກາງຮອດທ້ອງຖິ່ນ ເພື່ອໂຄສະນາເຜີຍແຜ່ເຜີຍແຜ່ຂໍ້ຕົກລົງສະບັບນີ້.

21.3 ຫ້ອງການກະຊວງ, ບັນດາກົມ, ສະຖາບັນ, ຂະແໜງການອ້ອມຂ້າງສູນກາງ ແລະ ອົງການປົກຄອງທ້ອງຖິ່ນທຸກຂັ້ນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 22 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນບັງຄັບໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ກະຊວງພະລັງງານ ແລະ ບໍ່ແຮ່

ລັດຖະມົນຕີ

ທອງພັດ ອິນທະວົງ